# ການປູກເຫັດນາງຟ້າ

ເປັນການລ້ຽງ ເສັ້ນໄຍເຫັດໃນຖົງຢາງ, ເຫັດແຕ່ລະ ຊະນິດມີສ່ວນປະສົມຄືກັນ. ແຕ່ຈະແຕກຕ່າງກັນ ບາງສ່ວນ, ແຕ່ປະຈຸບັນນິຍົມປູກໃສ່ ຂີ້ເລື່ອຍ ໂດຍສະເພາະ ຂີ້ເລື່ອຍຢາງພາລາ ແລະ ຂີ້ເລື່ອຍໄມ້ເນື້ອອ່ອນ ທີ່ໃຊ້ໄດ້ດີຄື: ໄມ້ໝາກມ່ວງ, ໄມ້ໝາກ ຂາມ, ໄມ້ຊຳສາ, ໄມ້ແດງນ້ຳ, ໄມ້ເປືອຍ ແລະ ອື່ນໆ, ການປູກເຫັດໃນຖົງຢາງ ສາມາດປູກໄດ້ຫລາຍຊະນິດເຊັ່ນ: ເຫັດນາງຟ້າ, ເຫັດນາງລົມ, ເຫັດຫູໜູ, ເຫັດເປົາຮື, ເຫັດຂອນຂາວ, ເຫັດເຂັມ ເງິນ, ເຫັດເຂັມທອງ ແລະ ເຫັດຫອມເປັນຕົ້ນ.



## ການປູກເຫັດນາງຟ້າປະກອບມີຂັ້ນຕອນດັ່ງນີ້:

- ການຜະລິດເຊື້ອໃນເມັດເຂົ້າຟ່າງ
- ການຜະລິດຖົງກ້ອນເຊື້ອເຫັດ
- ການກະຕຸ້ນໃຫ້ເກີດດອກ

## 1. ວັດຖຸ ແລະ ອຸປະກອນສຳລັບປູກເຫັດ

- ຂີ້ເລື້ອຍ ຫຼື ເຟືອງແຫ້ງ
- ຫົວເຊື້ອເຫັດ
- ຖົງຢາງທົນຮ້ອນຂະໜາດ 7 x 11,9 x 13 ນີ້ວ
- ຄໍຂວາດ
- ຢາງມັດ ແລະພຸ້ຍສຳຫລັບໜື້ງກ້ອນເຫັດ
- ໂຮງເຮືອນ ຫຼື ສະຖານທີ່ເປີດອກ



## 2. ການຜະລິດກ້ອນເຊື້ອ

ຫລັງຈາກປະສົມ ສູດອາຫານໃຫ້ເຂົ້າກັນໝົດແລ້ວ ກໍ່ໃຫ້ກວດ ເບິ່ງຄວາມຊຸ່ມ ດ້ວຍການກຳໃຫ້ແໜ້ນ ແລ້ວບີບເບິ່ງຫຼັງຈາກນັ້ນປ່ອຍມື ຖ້າເຫັນນ້ຳພໍຊືມໆ ສະແດງວ່າມີຄວາມຊຸ່ມພໍດີສາມາດນຳໄປຮ່າຍຢັດໃສ່ຖົງໄດ້.

## 3. ສູດປະສົມອາຫານ ໃນການຜະລິດກ້ອນ

### ສູດທີ່1

- ຂີ້ເລື່ອຍ ຫຼື ເຟືອງແຫ້ງ 100 ກິໂລ
- ຮຳອ່ອນ 3-5 ກິໂລ
- ດີເກືອ 0.2 ກິໂລ
- ປູນຂາວ 0.2 ກິໂລ
- ນ້ຳຕານ ຊາຍ 2-3 ກິໂລ
- ປະສົມນ້ຳ ທົດໃຫ້ມີຄວາມຊຸ່ມ ປະມານ 60-70 %

### ສູດທີ່2

- ຂີ້ເລື່ອຍ ຫຼື ເຟືອງແຫ້ງ 100 ກິ ໂລ
- ຮຳອ່ອນ 5 ກິໂລ
- ດີເກືອ 0,2 ກິ ໂລ
- ຫຍິບຊຳ 0,2 ກິໂລ
- ນ້ຳສະອາດ ປະສົມໃຫ້ມີຄວາມຊຸ່ມ 70-75 %



ກ້ອນເຫັດ ທີ່ອັດແລ້ວພ້ອມນຳໄປໜຶ້ງ, ຫລັງຈາກອັດກ້ອນສຳເລັດແລ້ວ ນຳໄປໜຶ້ງໃສ່ຟຸຍ ດ້ວຍຄວາມຮ້ອນ 100 ອົງສາ ໃຊ້ເວລານັບແຕ່ໝໍ້ຟົດ 3 ຊົ່ວໂມງ, ຈາກນັ້ນເອົາອອກຈາກໝໍ້ ປະໃຫ້ເຢັນ ແລະ ຢອດເຊື້ອເຫັດໃສ່, ການຢອດເຊື້ອຄວນຢອດ ໃນຫ້ອງທີ່ບໍ່ມີລົມພັດ ແລະ ຂ້າເຊື້ອດ້ວຍເຫຼົ້າ 90 ລ້າງມື ແລະ ເຂັມໃຫ້ສະອາດ. ຫລັງຈາກນັ້ນ ກໍ່ອັດດ້ວຍສຳລີ ແລະ ອັດດ້ວຍເຈັ້ຍ ແລ້ວນຳໄປບົ່ມເຊື້ອໄວ້ໃນຫ້ອງບົ່ມທີ່ມີອຸນຫະພູມ 29-32 ອົງສາ. ເພື່ອໃຫ້ເສັ້ນໄຍຈະເລີນເຕີບໂຕເຕັມກ້ອນ.



## 4. ການກະຕຸ້ນໃຫ້ເກີດດອກ

- ເມື່ອເສັ້ນໄຍໃນກ້ອນເຫັດຈະເລີນເຕີບໂຕເຕັມຖົງແລ້ວ ໃຫ້ນຳກ້ອນເຫັດໄປເປີດດອກຢູ່ໃນໂຮງເຮືອນ.
- ການເປີດດອກ ແມ່ນໃຫ້ນຳເຈັ້ຍທີ່ປິດຈຸກສຳລີ ແລະ ເອົາສຳລີອອກຈາກຄໍແກ້ວໃຫ້ໝົດ ຖອດຄໍກວດອອກ ແລ້ວພັບຄືນຄືເກົ່າ

- ໃຊ້ປາຍບ່ວງຂວາດເອົາເມັດເຂົ້າຟ່າງອອກໃຫ້ໝົດ.
- ເກັບກວາດເອົາຂີ້ເຫຍື່ອອອກໃຫ້ໝົດ.
- ຫົດນ້ຳໃຫ້ຊຸ່ມລະວັງຢ່າຫົດນ້ຳໃຫ້ເຂົ້າຖົງ.





## 5. ການເກັບດອກເຫັດ

ຄວນເກັບຢ່າງລະມັດ ລະວັງ ຢ່າໃຫ້ຕີນເຫັດຂາດ ຄາຄໍແກ້ວ ເພາະຈະເຮັດໃຫ້ຖົງເຊື້ອເນົ່າ ແລະ ເສຍໄວ ຫລັງຈາກເກັບດອກໃຫ້ໃຊ້ປາຍບ່ວງ ຂວາດຕີນເຫັດ ແລະ ເສດເຟືອງ ອອກໃຫ້ໝົດ ແລ້ວຫົດນ້ຳໃຫ້ຊຸ່ມ. ຖ້າຫົດນ້ຳບໍ່ພຽງພໍ ຈະເຮັດໃຫ້ດອກເຫັດກູດງໍ ແລະ ເຫັດຈະບໍ່ມີຄຸນນະພາບດີເຮັດໃຫ້ລາຄາຕົກ.

# ຂໍ້ແນະນຳ

# ການປູກເຫັດນາງຟ້າ

ມີນາ 2013




**ບໍລິສັດ ໄຟຟ້ານ້ຳເທີນ 2 ຈຳກັດ**

ພະແນກ ສິ່ງແວດລ້ອມ ແລະ ສັງຄົມ

ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ

ໜ່ວຍງານຟື້ນຟູຊີວິດການເປັນຢູ່

NTPC

Powering the Future